# ວາລະແຫ່ງຊາດ
# ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ (2021-2023)
# ທີ່ຕິດພັນ ກັບຂະແໜງ ກະສິກຳ ແລະ ປ່າໄມ້

ສະເໜີໂດຍ: ທ່ານ ປອ ພົມມີ ອິນທິຈັກ, ຮອງຫົວໜ້າກົມແຜນການ ແລະ ການເງິນ

ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ວາລະແຫ່ງຊາດ ໃຫ້ສຳເລັດຜົນຕາມຈຸດປະສົງ ແລະ ຄາດໝາຍ ທີ່ວາງໄວ້ ໂດຍສະເພາະແມ່ນການແກ້ໄຂບັນຫາທາງດ້ານເສດຖະກິດ ທີ່ຕິດພັນກັບຂະແໜງການກະສິກຳ ແລະ ປ່າໄມ້ ໃນຊ່ວງໄລຍະແຕ່ນີ້ ຫາທ້າຍປີ 2023, ຂະແໜງການກະສິກຳ ແລະ ປ່າໄມ້ ຈະສຸມໃສ່ 2 ວຽກຈຸດສຸມໃຫຍ່ຄື:

1. ຊຸກຍູ້ສົ່ງເສີມການຜະລິດກະສິກຳ ເພື່ອທົດແທນການນຳເຂົ້າ ທັງເພື່ອຫຼຸດຜ່ອນການໄຫຼອອກເງິນຕາ ໄປຕ່າງປະເທດ
2. ສຸມໃສ່ການຊຸກຍູ້ການຜະລິດກະສິກຳ ຕິດພັນກັບການປຸງແຕ່ງ ເປັນສິນຄ້າເພື່ອສົ່ງອອກໄປຕ່າງປະເທດ ນຳເອົາເງິນຕາ ເຂົ້າມາໃຫ້ຫຼາຍຂຶ້ນ

# ທິດທາງລວມ

ໃນປີ 3 ປີຕໍ່ໜ້າ (2021-2023) ຂະແໜງກະສິກໍາ ແລະ ປ່າໄມ້ ຈະສູ້ຊົນ ຮັກສາລະດັບການຂະຫຍາຍຕົວ ຂອງກະສິກໍາ ສະເລ່ຍ 2,5% ຕໍ່ປີ, ປະກອບສ່ວນໃນ ລວມຍອດຜະລິດຕະພັນພາຍໃນ (GDP) 15,3% ໃນນັ້ນ,

- ການປູກຝັງຂະຫຍາຍຕົວ 1,2-1,4 % ຕໍ່ປີ,
- ຝູງສັດຂະຫຍາຍຕົວຢູ່ໃນລະດັບ 3-4 % ຕໍ່ປີ;
- ການລ້ຽງປາ ແລະ ສັດນໍ້າ ຂະຫຍາຍ 3-4 % ຕໍ່ປີ;
- ຂະແໜງປ່າໄມ້ຂະຫຍາຍ 1,5%;
- ມູນຄ່າການສົ່ງອອກສິນຄ້າ ກະສິກໍາ ສະເລ່ຍ 1.200 ລ້ານໂດລາຕໍ່ປີ;
- ການບໍລິໂພກທາດຊີ້ນ 73 ກິໂລ/ຄົນ/ປີ;

เພື່ອຈັດຕັ້ງປະຕິບັດ 2 ວຽກຈຸດສຸມໃຫຍ່ ກໍ່ຄືທິດທາງລວມ ຂ້າງເທິງນັ້ນ ຈະໄດ້ສຸມໃສ່ 5 ວຽກຈຸດສຸມຕົ້ນຕໍດັ່ງນີ້:

**ວຽກຈຸດສຸມທີ1:** ເລັ່ງຊຸກຍູ້ການສົ່ງອອກສິນຄ້າກະສິກຳ ທີ່ໄດ້ມີສັນຍາລົງນາມກັບປະເທດຄູ່ການຄ້າແລ້ວ ໃນນີ້ ສຸມໃສ່ຕະຫຼາດ ສປ ຈີນ ພ້ອມດຽວກັນ ກໍເລັ່ງເຈລະຈາເຊັນສັນຍາການສົ່ງອອກສິນຄ້າກະສິກຳທີ່ໄດ້ ກຳນົດຢູ່ ໃນບັນຊີພືດ ແລະ ຜະລິດຕະພັນພືດທີ່ເປັນບຸລິມະສິດ ສຳລັບເຈລະຈາເປີດຕະຫຼາດ ກັບ ສປ ຈີນ ແລະ ປະເທດໃກ້ຄຽງ.

## ດ້ານປູກຝັງ:

ສໍາລັບສິນຄ້າດ້ານປູກຝັງ ທີ່ໄດ້ມີສັນຍາລົງນາມ ມາດຕະຖານດ້ານສຸຂະນາໄມ ພືດ ກັບປະເທດຄູ່ການຄ້າ ມີດັ່ງນີ້:

- ສປ ຈີນ ແລ້ວ ມີຈໍານວນທັງໝົດ 07 ພືດ (ເຂົ້າ, ມັນຕົ້ນ, ມັນດ້າງ, ສາລີ, ໝາກໂມ, ກ້ວຍ ແລະ ພືດຕະກູນຖົ່ວ);
- ສສ ຫວຽດນາມ 16 ພືດ (ມີບັນຊີສະເພາະ)
- ຣາຊະອານາຈັກໄທ 15 ພືດ (ມີບັນຊີສະເພາະ)

ແມ່ນ ສືບຕໍ່ຜະລິດ ແລະ ສົ່ງອອກ ຢ່າງຕໍ່ເນື່ອງ ໃນ 3 ປີຕໍ່ໜ້າ.

## ດ້ານປູກຝັງ:

ພ້ອມດຽວກັນນັ້ນ ກໍ່ເລັ່ງສືບຕໍ່ເຈລະຈາ ແລະ ເຊັນອານຸສັນຍາ ຄື:

- ກັບ ສປ ຈີນ ຕື່ມອີກ 05 ຊະນິດພືດ (ພືດຕະກູນໝາກກ້ຽງ, ໝາກໜອດ ແລະ ຢາສູບ),
- ກັບໄທ ຈຳນວນ 05 ຊະນິດພືດ (ໝາກມັງກອນ, ໝາກນັດ, ເປືອກຕົ້ນຢາສູບ, ໝາກສະຕໍເບີຣີ ແລະ ແກ່ນຖົ່ວດິນ)
- ກັບ ສສ. ຫວຽດນາມ.

ສຳລັບພືດບຸລິມະສິດ ທີ່ຈະສະເໜີເປີດຕະຫຼາດໃໝ່ຈຳນວນ 91 ພືດ, ໃນນີ້, ມີຈ□ານວນ 15 ພືດ ໄດ້ສ□າເລັດການວິໄຈຄວາມສ່ຽງສັດຕູພືດ ແລະ ໄດ້ສົ່ງໃຫ້ຝ່າຍ ສປ ຈີນແລ້ວ, ໂດຍໃຫ້ໄດ້ເຊັນສັນຍາໃນປີ 2022 ຈ□ານວນ 5 ສະບັບ (ຖົ່ວລຽນ, ໝາກມີ້, ໝາກມ່ວງ, ທືອດຸກເດືອຍ, ຢາຫົວ) ແລະ ປີ 2023 ຈຳນວນ 9 ສະບັບ ສະບັບ (ໝາກລຳໄຍ, ໝາກມັງກອນ, ໝາກເຜັດ, ໝາກນັດ, ໝາກແໜ່ງ, ຖົ່ວດິນ, ສາລີຫວານ, ຂີງ, ຝັກດອກມ້ອນ).

## ດ້ານການລ້ຽງສັດ:

- ສືບຕໍ່ປະຕິບັດຂໍ້ກຳນົດວ່າດ້ວຍເງື່ອນໄຂ ດ້ານສຸຂານາໄມກ່ຽວກັບການກັກກັນ ແລະ ກວດ ສຸຂະພາບສັດໃຫຍ່ທີ່ຈະສົ່ງອອກ ຈາກສປປລາວ ໄປ ສປຈີນ ທີ່ໄດ້ຕົກລົງນຳກັນແລ້ວ, ໂດຍ ຕັ້ງເປົ້າໝາຍສົ່ງອອກງົວແລະຄວາຍ 50.000 ໂຕຕໍ່ປີ ດ້ວຍການສ້າງເປັນໂຄງການສົ່ງເສີມ ການຜະລິດງົວ ເພື່ອສົ່ງອອກຢູ່ທົ່ວປະເທດແຕ່ໄດ້ເນັ້ນໃສ່ເຂດຈຸດສຸມບັນດາແຂວງພາກເໜືອ ແລະ ບັນດາເມືອງທີ່ໃກ້ຄຽງກັບແລວທາງລົດໄຟທີ່ມີທ່າແຮງການປູກຫຍ້າລ້ຽງສັດເປັນຕົ້ນຕໍ,

- ສືບຕໍ່ເຈລະຈາຜະລິດຕະພັນຊີ້ນ ໃຫ້ສຳເລັດ;

- ແຕ່ນີ້ຮອດທ້າຍປີ 2023 ພວກເຮົາຈະສຸມໃສ່ຈັດຕັ້ງປະຕິບັດໃນເຂດຈຸດສຸມບູລິມະສິດ ໂດຍ ສະເພາະແມ່ນເຂດຕາມແລວທາງລົດໄຟ ລາວ-ຈີນ ແລະ ບັນດາແຂວງທີ່ມີທ່າແຮງ ແລະ ມີ ຖານການຜະລິດ.

**ວຽກຈຸດສຸມທີ2:** ເລັ່ງປັບປຸງມາດຕະຖານ ແລະ ຄຸນນະພາບສິນຄ້າກະສິກຳ ລວມທັງການຍົກລະດັບຄວາມອາດສາມາດໃນວຽກງານກວດກາ ແລະ ຢັ້ງຢືນມາດຕະຖານຜະລິດຕະພັນກະສິກຳເປັນຕົ້ນວຽກງານສຸຂະນາໄມພືດແລະສັດ (SPS), ການຢັ້ງຢືນແຫຼ່ງກຳເນີດສິນຄ້າ, ການຢັ້ງຢືນມາດຕະຖານກະສິກຳອິນຊີ ແລະ ກະສິກຳທີ່ດີ (GAP,GAHP GMP, HACCP); ເລັ່ງເຜີຍແຜ່ນິຕິກຳ, ນະໂຍບາຍ ແລະ ມາດຕະຖານທີ່ກ່ຽວຂ້ອງກັບການປະຕິບັດມາດຕະຖານ (SPS) ທ້ອງຖິ່ນ ແລະ ຜູ້ປະກອບການໃຫ້ກວ້າງຂວາງແລະເຂົ້າເຖິງເປົ້າໝາຍ; ເລັ່ງປັບປຸງກົນໄກວາງແຜນ, ປະສານງານແລະປ່ຽນຂໍ້ມູນດ້ານການຜະລິດແລະຕະຫຼາດສຳລັບສິນຄ້າກະສິກຳສົ່ງອອກລະຫວ່າງຂັ້ນສູນກາງ, ທ້ອງຖິ່ນແລະຜູ້ປະກອບການໃຫ້ດີຂຶ້ນ.

## ດ້ານປູກຝັງ:

- ປັບປຸງມາດຕະຖານລະບົບການຜະລິດກະສິກຳສະອາດ (OA,GAP ແລະ ມາດຕະຖານອື່ນໆ) ໃຫ້ສາມາດເທົ່າທຽມມາດຕະຖານຂອງ ອາຊຽນ, ປັບປຸງມາດຕະຖານສະເພາະພືດສິນຄ້າ 57 ພືດ,
- ສ້າງມາດຕະຖານສະເພາະພືດ (OA, GAP) ຈ□ານວນ 15 ພືດ,
- ຜັນຂະຫຍາຍມາດຕະຖານສາກົນດ້ານສຸຂານາໄມພືດ (ISPMs) ຈ□ານວນ 45 ສະບັບ;
- ກວດກາຄຸນນະພາບ ແລະ ມາດຕະຖານຜະລິດຕະພັນຈາກພືດ ຢູ່ດ່ານສາກົນ ແລະ ແຂວງຈຳນວນໜຶ່ງ;
- ອອກໃບຢັ້ງຢືນກະສິກຳສະອາດ ໃຫ້ໄດ້ 250 ຫົວໜ່ວຍ,
- ເຜີຍແຜ່ນິຕິກຳມາດຕະຖານ SPS ຈຳນວນ 12 ສະບັບ;
- ຝຶກອົບຮົມ ແລະ ເຜີຍແຜ່ ມາດຕະຖານ ກະສິກຳສະອາດ ແລະ ກະສິກຳທີ່ດີ (OA,GAP) ໃຫ້ຜູ້ຜະລິດ ແລະ ຜູ້ປະກອບການ ຈຳນວນ 100 ຫົວໜ່ວຍ;
- ສ້າງນັກກວດກາຂັ້ນສູນກາງ ແລະ ຂັ້ນແຂວງ ກ່ຽວກັບ ກະສິກຳສະອາດ ແລະ ມາດຕະຖານ ອື່ນໆ;
- ປັບປຸງກົນໄກວາງແຜນ, ປະສານງານ ແລະ ແລກປ່ຽນຂໍ້ມູນດ້ານການຜະລິດ ແລະ ຕະຫຼາດ ສຳລັບສິນຄ້າກະສິກຳສົ່ງອອກລະຫວ່າງຂັ້ນສູນກາງ, ທ້ອງຖິ່ນ ແລະ ຜູ້ປະກອບການໃຫ້ດີຂຶ້ນ.

## ດ້ານການລ້ຽງສັດ:

- ປັບປຸງກົດໝາຍວ່າດ້ວຍການປະມົງໃຫ້ສຳເລັດໃນປີ 2022,
- ຈັດຕັ້ງປະຕິບັດນິຕິກຳລຸ່ມດຳລັດ 5 ສະບັບ (ດຳລັດວ່າດ້ວຍການກັນ ແລະ ຄວບຄຸມພະຍາດສັດ ດຳລັດວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນ ສິນຄ້າກ່ຽວກັບສັດ, ດຳລັດວ່າດ້ວຍອາຫານສັດ, ດຳລັດວ່າດ້ວຍຢາສັດຕະວະ ແພດ ແລະ ດຳລັດວ່າດ້ວຍການຂ້າສັດ ແລະ ການກວດກາອະນາໄມຊີ້ນ) ໃຫ້ຄົບຖ້ວນແລະມີຜົນສັກສິດ.
- ຊຸກຍູ້ສົ່ງເສີມການຈັດຕັ້ງປະຕິບັດມາດຕະຖານ 9 ສະບັບໃຫ້ເປັນຈິງ,
- ອອກມາດຕະຖານ, ນິຕິກຳລຸ່ມກົດໝາຍເພີ່ມເຕີມຈຳນວນ 18 ສະບັບໃຫ້ສຳເລັດ.

**ວຽກຈຸດສຸມທີ3:** ເລັ່ງກຳນົດບັນຊີລາຍການສິນຄ້າກະສິກຳເພື່ອທົດແທນການນຳເຂົ້າ ແລະ ນະໂຍບາຍສົ່ງເສີມຢ່າງ ຮອບດ້ານ ໄປຄຽງຄູ່ກັບການຂະຫຍາຍ ແລະ ປັບປຸງ ກຳລັງການຜະລິດ (ກຸ່ມການຜະລິດ, ສະຫະກອນກະສິກຳ, ສະມາຄົມ, ເຄືອຂ່າຍກະສິກອນ ແລະ ອື່ນໆ) ແລະ ຮູບແບບການຜະລິດຕ່າງໆ ໃຫ້ກວ້າງຂວາງ ແລະ ເປັນຮູບປະທຳຫຼາຍຂຶ້ນ.

## ດ້ານສົ່ງເສີມເຕັກນິກ:

ສຸມໃສ່ ປັບປຸງ ແລະ ສົ່ງເສີມການຈັດຕັ້ງກຳລັງການຜະລິດ ເພື່ອຍົກສູງຜົນຜະລິດ ໂດຍເລີ່ມ ຈາກ ໃຫ້ບຸລິມະສິດການຜະລິດເປັນສິນຄ້າ, ເສດຖະກິດຮ່ວມມື ໂດຍຮູບແບບການຈັດຕັ້ງກຳລັງ ການຜະລິດ ເພື່ອສ້າງຄວາມສະດວກ ໃຫ້ການຊຸກຍູ້ສົ່ງເສີມ, ເຂົ້າເຖິງແຫຼ່ງທຶນ ແລະ ຂໍ້ມູນຂ່າວ ສານດ້ານການຕະຫຼາດໄດ້ງ່າຍ, ຈັດຕັ້ງການຜະລິດ ແລະ ຈຳໜ່າຍ ໃຫ້ຄວາມເປັນທຳໃຫ້ແກ່ກຸ່ມ ການຜະລິດ ແລະ ສັງຄົມ, ຊຶ່ງກຸ່ມການຜະລິດທີ່ມີແລ້ວໃນປະຈຸບັນ ຈ□ານວນ 1.528 ກຸ່ມ, ສະຫະກອນກະສິກຳ ຈຳນວນ 26 ສະຫະກອນ, ສະມາຄົມກະສິກ□າ 8 ສະມາຄົມ ແລະ ເຄືອ ຂ່າຍຊາວກະສິກອນຜະລິດກະສິກຳເປັນສິນຄ້າເພື່ອສະໜອງຕະຫຼາດພາຍໃນ ແລະ ສົ່ງອອກ ໃຫ້ ມີຄວາມເຂັ້ມແຂງຂຶ້ນ ເພື່ອເປັນພື້ນຖານໃນການກ້າວໄປເປັນສະຫະກອນແບບໃໝ່ ທີ່ມີຄວາມ ສາມາດຜະລິດຕອບສະໜອງຢູ່ພາຍໃນ ທົດແທນການນຳເຂົ້າ;

## ດ້ານປູກຝັງ:

- ກຳນົດບັນຊີ ລາຍການສົ່ງເສີມການຜະລິດພາຍໃນ ເພື່ອທົດແທນການນຳເຂົ້າຜະລິດພາຍ ສຸມໃສ່ ພືດທີ່ມີທ່າແຮງການຜະລິດຢູ່ພາຍໃນ;
- ກຳນົດນະໂຍບາຍ ນະໂຍບາຍ ຕາມທິດ ການຜະລິດທັນສະໄໝ, ສະອາດ, ປອດໄພ ແລະ ເປັນມິດຕໍ່ສິ່ງແວດລ້ອມ;
- ປັບປຸງໂຄງປະກອບການຜະລິດ, ສ້າງນິຕິກຳ ທີ່ສະໜັບສະໜູນ ການຜະລິດພືດ ເພື່ອທົດແທນການນຳເຂົ້າ ແລະ ຜະລິດຕະພັນພືດເປັນສິນຄ້າສົ່ງອອກ ແລະ ປະຕິບັດ,
- ປະກາດບັງຄັບໃຊ້ ກົດໝາຍປ້ອງກັນ ແລະ ກັກກັນພືດ ເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016 ຕ້ອງເຈລະຈາ ກ່ອນນຳເຂົ້າພືດ ແລະ ຜະລິດຕະພັນພືດເຂົ້າ ສປປ ລາວ ໂດຍຜ່ານການວິໄຈ ຄວາມສ່ຽງສັດຕູພືດຈາກ ກະຊວງກະສິກຳ ແລະ ປ່າໄມ້.

## ດ້ານລ້ຽງສັດ:

ສັດທີ່ມີຊີວິດ (ໝູ, ງົວ, ແບ້, ສັດປີກ, ປາ,...) ແລະ ຜະລິດຕະພັນສັດຂັ້ນຕົ້ນ ລວມທັງ ແນວພັນ ແລະ ອາຫານສັດ ທີ່ເຮົາສາມາດຜະລິດໄດ້ພາຍໃນ.

## ດ້ານການຄົ້ນຄ້ວາທົດລອງ:

ສຸມໃສ່ຄົ້ນຄວ້າຜະລິດແນວພັນພືດ, ສັດ, ປາ, ໄມ້ໃຫ້ໝາກ, ແນວພັນຫຍ້າລ້ຽງສັດ, ໄມ້ອຸດສະຫະກຳ ທີ່ມີທ່າມີທ່າແຮງ ເພື່ອທົດແທນການນຳເຂົ້າ.

## ດ້ານປັດໃຈການຜະລິດ:

ຊຸກຍູ້ຜູ້ປະກອບການໃນການປັບປຸງໂຄງລ່າງພື້ນຖານ ການຜະລິດຝຸ່ນຊີວະພາບ, ດິນປູກ ເພື່ອທົດແທນການນຳເຂົ້າ. ຊຸກຍູ້ຜູ້ປະກອບການໃນການປັບປຸງໂຮງງານ ຫົວອາຫານສັດ-ປາ ທີ່ມີຢູ່ໃນປະຈຸບັນ ຈຳນວນ 5 ແຫ່ງໃຫ້ສາມາດຜະລິດເຕັມກຳລັງການຜະລິດ ຂອງໂຮງງານ.

**ວຽກຈຸດສຸມທີ4:** ເລັ່ງປັບປຸງແລະພັດທະນາໂຄງລ່າງພື້ນຖານການຜະລິດແລະເຕັກນິກເພື່ອຫຼຸດຜ່ອນຕົ້ນທຶນການຜະລິດເຊັ່ນ: ໂຮງອົບ, ໂຮງຄັດເມັດ, ລານຕາກ, ສາງ, ຫ້ອງວິໃຈຕ່າງໆແລະຕະຫຼາດຂາຍຍ່ອຍ/ຂາຍຍົກ.

**ດ້ານຊົນລະປະທານ:**

ຟື້ນຟູສອ້ມແປງ ລະບົບຊົນລະປະທານ ທີ່ມີແລ້ວ ໃນປະຈຸບັນ ໃຫ້ສາມາດນໍາໃຊ້ໄດ້ ແລະ ສາມາດສະໜອງນໍ້າໃຫ້ແກ່ເນື້ອທີ່ທໍາການຜະລິດ ໂດຍສະເພາະ ແມ່ນ ບັນດາໂຄງການ ຊົນລະປະທານ ທີ່ນອນໃນເຂດຈຸດສຸມການຜະລິດ, ຊຶ່ງປະຈຸບັນ ໃນທົ່ວປະເທດ ມີໂຄງການ ຊົນລະປະທານ ລວມທັງໝົດ 15.119 ໂຄງການ, ສາມາດສະໜອງນໍ້າໃຫ້ແກ່ເນື້ອທີ່ການ ຜະລິດ ໃນລະດູແລ້ງໄດ້ 166.000 ເຮັກຕາ ແລະ ລະດູຝົນ 280.000 ດຮັກຕາ.

**ດ້ານສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ:**

ຂະຫຍາຍ ແລະ ພັດທະນາໂຄງລ່າງການຜະລິດ ແລະ ເຕັກນິກ ເພື່ອຫຼຸດຜ່ອນຕົ້ນທຶນ ແລະ ຫັນໄປສູ່ລະບົບທັນສະໄໝ ເປັນຕົ້ນ ແມ່ນ:

- ຂະຫຍາຍໂຮງອົບໃຫ້ເພີ່ມຂຶ້ນ 269 ແຫ່ງ ຈາກຈຳນວນປະຈຸບັນ 895 ແຫ່ງ;
- ໂຮງຄັດເມັດພັນເຂົ້າ ເພີ່ມຂຶ້ນ 37 ແຫ່ງ ຈາກຈຳນວນປະຈຸບັນ 52 ແຫ່ງ;
- ສາງເກັບມ້ຽນຜົນຜະລິດກະສິກຳ ເພີ່ມຂຶ້ນ 287 ແຫ່ງ ຈາກຈຳນວນປະຈຸບັນ 1.435 ແຫ່ງ;
- ເອື້ອອຳນວຍ ແລະ ສົ່ງເສີມການສ້າງຕະຫລາດ ຂາຍຍົກສິນຄ້າກະສິກຳ ເພີ່ມຂຶ້ນ 3 ຈາກຈຳນວນປະຈຸບັນ 22 ແຫ່ງ;
- ຕະຫຼາດຂາຍຍ່ອຍສິນຄ້າກະສິກຳ ເພີ່ມຂຶ້ນ 64 ຈາກຈຳນວນປະຈຸບັນ 648 ແຫ່ງ;
- ຊຸກຍູ້ການນຳໃຊ້ກົນຈັກເຂົ້າໃນການຜະລິດເຂົ້າ ເປັນຕົ້ນ:
  - ການກະກຽມດິນເພີ່ມຂຶ້ນ 6% (ຈາກປະຈຸບັນ 84%);
  - ການປູກເພີ່ມຂຶ້ນ 10% (ຈາກປະຈຸບັນ 5%);
  - ການເກັບກ່ຽວ ເພີ່ມຂຶ້ນ 20% (ຈາກປະຈຸບັນ 30%)
- ສ້າງ ແລະ ປັບປຸງ ລະບົບສາງເກັບມ້ຽນແນວພັນ ເຂົ້າລຸ້ນ 3 ໃຫ້ຮັບປະກັນການສະໜອງໃນທຸກລະດູການ (ລວມທັງສາງຂອງລັດ, ຂອງຜູ້ປະກອບການ ແລະ ຂອງກຸ່ມຜູ້ຜະລິດ.

## ດ້ານການຄົ້ນຄວ້າທົດລອງ:

- ພັດທະນາພື້ນຖານໂຄງລ່າງ 4 ສູນຄົ້ນຄວ້າ ແລະ ສະຖານີຜະລິດແນວພັນເຂົ້າ ໃຫ້ມີຄວາມສະດວກ ແລະ ທັນສະໄໝ ເພີ່ມຂຶ້ນ
- ສຸມໃສ່ພັດທະນາບັນດາສູນຄົ້ນຄວ້າແນວພັນພືດເສດຖະກິດຕ່າງໆ,
- ສຸມໃສ່ພັດທະນາພື້ນຖານໂຄງລ່າງສໍາລັບການຄົ້ນຄ້ວາ ແລະ ຂະຫຍາຍແນວພັນສັດ, ປາ ແລະ ສັດນໍ້າ ໂດຍການປັບປຸງ-ສ້າງຫ້ອງວິໄຈຜະລິດນໍ້າເຊື້ອແຊ່ແຂງ, ຫ້ອງການ, ຫ້ອງຝຶກອົບຮົມ, ຄອກງົວພໍ່ພັນ
- ປັບປຸງໂຄງລ່າງພື້ນຖານສໍາລັບການຄົ້ນຄ້ວາ ແລະ ຂະຫຍາຍແນວພັນສັດ ໂຄງການ (ຫມູ), ປັບປຸງຄອກງົວພໍ່ແມ່ພັນ, ສ້າງຈຸດສາທິດ ແລະ ບ່ອນຝຶກອົບຮົມ, ສ້າງຟາມຕົວແບບ, ເຮືອນຮົມແບບພື້ນບ້ານ, ສາງອາເນກາປະສົງ ແລະ ສາງເຢັນ.
- ກໍ່ສ້າງໂຮງເຮືອນຜະລິດລູກປາ, ລະບົບນໍ້າ ແລະ ໜອງ ອະນຸບານ, ຫອ້ງວິໄຈ ແລະ ສ້າງຮົ້ວແບບຖາວອນອ້ອມສູນ.
- ປັບປຸງພື້ນຖານໂຄງລ່າງເພື່ອຮັບໃຊ້ວຽກຄົ້ນຄວ້າ ແລະ ຂະຫຍາຍກາເຟ ແລະ ໄມ້ໃຫ້ໝາກເຂດໜາວ
- ຕິດຕັ້ງອຸປະກອນວິໄຈໃສ່ຫ້ອງທົດລອງທີ່ສ້າງຂຶ້ນໃໝ່ ແລະ ດໍາການວິໄຈກໍານົດມາດຕະຖານຢາງພາລາ ແລະ ຢັ້ງຢືນຜົນການວິໄຈຢາງພາລາ ເພື່ອຊຸກຍູ້ການສົ່ງອອກຢາງພາລາ,
- ປັບປຸງພື້ນຖານໂຄງລ່າງລະບົບເຄືອຂາຍ ແລະ ບັນດາຖານຂໍ້ມູນການຄົ້ນຄວ້າເພື່ອໃຫ້ໄດ້ມາດຕະຖານ ແລະ ຮອງຮັບກັບວຽກງານທັງສະຖາບັນ ແລະ ກະຊວງ.

# ພື້ນຖານໂຄງລ່າງດ້ານການວິໄຈ, ຍັ້ງຢືນດ້ານການລ້ຽງ ສັດ ແລະການປະມົງ:

- ປັບປຸງສູນວິໄຈພະຍາດສັດແຫ່ງຊາດໃຫ້ໄດ້ມາດຕະຖານສາກົນໃດໜຶ່ງ,
- ປັບປຸງສູນວິໄຈອາຫານສັດຂັ້ນສູນກາງໃຫ້ທັນສະໄໝ,
- ປັບປຸງຫ້ອງວິໄຈນ້ຳສຳລັບການລ້ຽງສັດນ້ຳໃຫ້ສາມາດວິໄຈໄດ້ໂດຍພື້ນຖານ, ປະກອບເຄື່ອງມື ຜະລິດ ແລະ ກວດກາຄຸນະພາບຢາກັນພະຍາດສັດໃຫ້ທັນສະໄໝ,
- ຈັດຝຶກອົບຮົມສ້າງຄວາມອາດສາມາດໃນການວິໄຈພະຍາດສັດ, ອາຫານສັດ, ນ້ຳແລະການ ຜະລິດຢາກັນພະຍາດສັດໃຫ້ແກ່ພະ ນັກງານວິຊາການທີ່ກ່ຽວຂ້ອງ.

**ວຽກຈຸດສຸມທີ5:** ເລັ່ງຈັດບຸລິມະສິດ ແລະ ກໍານົດເຂດການລົງທຶນດ້ານກະສິກໍາ, ເອົາໃຈໃສ່ຕິດຕາມ-ກວດກາ ໂຄງການລົງທຶນໃນຂະແໜງກະສິກໍາ ອີງຕາມສັນຍາທີ່ໄດ້ຕົກລົງ; ປັບປຸງກົນໄກການລົງທຶນຕາມ ຮູບແບບຮ່ວມມືລັດ-ເອກະຊົນ, ການຜະລິດກະສິກໍາຕາມສັນຍາ ເຊັ່ນ: ຮູບແບບ 2+3, ຮູບແບບ PPP, ຮູບແບບເຊົ່າ ຫຼື ສໍາປະທານດິນລັດ.

## ດ້ານການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ:

- ສືບຕໍ່ ສຳຫຼວດ ເກັບຕົວຢ່າງດິນ, ວິໄຈດິນ, ປະເມີນຄຸນນະພາບດິນ ຈັດຄວາມເໝາະສົມຂອງດິນຕໍ່ພືດປູກ, ກຳນົດແບ່ງເຂດຜະລິດກະສິກຳສະເພາະ ໂດຍເລັ່ງໃສ່ບັນດາແຂວງຕາມແລວທາງລົດໄຟ ອີງຕາມຄວາມເໝາະສົມຂອງດິນ ໃຫ້ພຽງພໍເໝາະສົມກັບຄວາມຕ້ອງການເພື່ອຄໍ້າປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າສົ່ງອອກທີ່ມີຕະຫຼາດຮອງຮັບທີ່ໄດ້ເຊັນສັນຍາ ແລ້ວ ແລະ ແຜນຈະເຊັນສັນຍາ;
- ປັບປຸງ ຫ້ອງວິໄຈດິນ, ຝຸ່ນ ໃນຂັ້ນສູນກາງ ໃຫ້ສາມາດວິໄຈຄຸນສົມບັດທາງດ້ານເຄມີ, ຊີວະ ແລະ ຟີຊິກຂອງດິນ ໃຫ້ໄດ້ຄົບທຸກປັດໃຈທີ່ສຳຄັນ ເຊັ່ນ: ທາດອາຫານພືດ, ສານຕົກຄ້າງ ແລະ ຈຸລິນຊີໃນດິນ;
- ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນຫ້ອງວິໄຈຂັ້ນສູນກາງ ໃຫ້ສາມາດວິໄຈດິນ ແລະ ຝຸ່ນໄດ້ຄົບທຸກໂຕຊີ້ວັດ;
- ປັບປຸງຄຸນນະພາບການວິໄຈໃຫ້ເປັນທີ່ຍອມຮັບຂອງສັງຄົມ ແລະ ສາກົນ; ວິໄຈດິນ ແລະ ໃຫ້ຄຳແນະນຳການປັບປັງດິນ ພາກສະໜາມ ໃຫ້ກຸ່ມຜະລິດຕ່າງໆເຊັ່ນ: ກຸ່ມຜະລິດຜັກທ່າຊ້າງ, ກຸ່ມຜະລິດຜັກແອກຊ້າງ, ກຸ່ມຜະລິດຜັກປາກຊາບໃໝ່, ກຸ່ມຜະລິດເຂົ້າບ້ານໝາກນາວ ເປັນຕົ້ນ;

## ດ້ານການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ:

- ຕິດຕາມ ກວດກາ ການນຳໃຊ້ທີ່ດິນກະສິກຳ ຂອງບັນດາໂຄງເຊົ່າ ແລະ ສຳປະທານທີ່ດິນກະສິກຳ ໃນເຂດບູລິມະສິດຈຸດສຸມພັດທະນາກະສິກຳເປັນຄ້າ;
- ສ້າງ ແລະ ປັບປຸງນິຕິກຳ, ລະບຽບການຄຸ້ມຄອງທີ່ດິນກະສິກ□າໃຫ້ສອດຄອງ ແລະ ເໝາະສົມໃນການນຳໃຊ້ໃນປະຈຸບັນ
  1) ສ້າງ ແລະ ປັບປຸງດຳລັດວ່າດ້ວຍທີ່ດິນກະສິກຳ ໃຫ້ສຳເລັດ ແລະ ສາມາດນຳໃຊ້ໄດ້ໃນຂອບເຂດທົ່ວປະເທດ,
  2) ຄຳສັ່ງວ່າດ້ວຍ ການຫ້າມຫັນປ່ຽນທີ່ດິນເຂດຊົນລະປະທານ ຢູ່ບັນດາແຂວງ ຕາມແລວທາງລົດໄຟ ໄປເປັນດິນປະເພດອື່ນ;
- ສ້າງ ແລະ ພັດທະນາ ຄູ່ມືທາງດ້ານເຕັກນິກວິຊາການໃນການຈັດການດິນ, ການປັບປຸງດິນແນໃສ່ຍົກສະມັດຕະພາບການຜະລິດພືດບູລິມະສິດສົ່ງອອກ ແລະ ເກັບກຳຂໍ້ມູນກຸ່ມຊາວກະສິກອນ,ຜູ້ປະກອບການ,ພື້ນທີ່ຂອງການສຸາທິດ,ຝຶກອົບຮົມເຜີຍແຜ່ເພື່ອຮັບປະກັນໃນການນຳເຂົ້າຝຸ່ນ ແລະ ສາມາດຜະລິດເປັນສິນຄ້າສົ່ງອອກ.

# ຄຸ້ມຄອງການລົງທຶນ ໃນຂະແໜງ ກະສິກຳ ແລະ ປ່າໄມ້:

- ປັບປຸງກົນໄກການລົງທຶນ ຕາມຮູບແບບຮ່ວມມືລັດ-ເອກະຊົນ, ການຜະລິດກະສິກຳຕາມສັນຍາ ເຊັ່ນ: ຮູບແບບ 2+3, ຮູບແບບ PPP, ຮູບແບບເຊົ່າ ຫຼື ສຳປະທານ ທີ່ດິນຂອງລັດ ເຊັ່ນ: ການຜະລິດກະສິກຳຕາມສັນຍາ (ຮູບແບບ 2+3)
- ສ້າງນິຕິກຳການຜະລິດກະສິກຳ ຕາມຂໍ້ຜູກພັນສັນຍາ ໃຫ້ສຳເລັດ ປີ 2023, ຮູບແບບສັນຍາ 2023 ແລະ ສົ່ງເສີມການຜະລິດກະສິກຳຕາມຂໍ້ຜູກພັນ ລະຫວ່າງ ຊາວກະສິກອນ ແລະ ນັກລົງທຶນ 2023;
- ສົ່ງເສີມການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ເອກະຊົນ Public Private Partneship(PPP) ຕາມກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ) ເລກທີ 14/ສພຊ, ລົງວັນທີ 17/11/2016;
- ເອົາໃຈໃສ່ຕິດຕາມ-ກວດກາໂຄງການລົງທຶນໃນຂະແໜງການກະສິກຳ ໂດຍອີງໃສ່ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ) ເລກທີ 14/ສພຊ, ລົງວັນທີ 17/11/2016.

# ຂໍຂອບໃຈ